ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 107 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 14.6.2017

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 03 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 07/ຄປຈ, ລົງວັນທີ 01 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 03 / 05 / 17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ
## (ສະບັບປັບປຸງ)

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງຮ່າງກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍຂອງ ວັນທີ 03 ພຶດສະພາ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 15 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 03 ພຶດສະພາ 2017

# ກົດໝາຍວ່າດ້ວຍ
# ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມກວດກາວຽກງານຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເພື່ອຮັບປະກັນໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຢ່າງມີປະສິດທິຜົນ, ຍົກສູງຄວາມຮັບຜິດຊອບຂອງລັດ, ສັງຄົມ, ຄອບຄົວ ຕໍ່ການປັບປຸງກໍ່ສ້າງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແນໃສ່ເຮັດໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນອົງການຈັດຕັ້ງທີ່ໜັກແໜ້ນທາງດ້ານການເມືອງ, ເຂັ້ມແຂງທາງດ້ານການຈັດຕັ້ງ, ສາມາດເຕົ້າໂຮມເຍົາວະຊົນ, ອະນຸຊົນ ແລະ ສຶກສາອົບຮົມໃຫ້ກາຍເປັນຜູ້ສືບທອດພາລະກິດປະຕິວັດຂອງພັກ, ຂອງຊາດ ແລະ ປະກອບສ່ວນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນ ໜຶ່ງໃນອົງການຈັດຕັ້ງມະຫາຊົນໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ເປັນການຈັດຕັ້ງຂອງຊາວໜຸ່ມລາວຜູ້ຫ້າວຫັນ, ດີເດັ່ນ, ໄດ້ຜ່ານການຝຶກຝົນຫຼໍ່ຫຼອມ ຈາກຂະບວນການຂອງມະຫາຊົນ.

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຂຽນອັກສອນຫຍໍ້ວ່າ: “ຄຊປປລ”.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ໝາຍເຖິງ ຄະນະນຳຂອງຊາວໜຸ່ມ ຊຶ່ງຖືກເລືອກຕັ້ງ ໂດຍກອງປະຊຸມໃຫຍ່ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
2. ເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ໝາຍເຖິງ ຜູ້ເປັນຫົວໜ້າຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ;
3. ຄະນະເລຂາທິການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໝາຍເຖິງ ຄະນະປະຈຳຂອງຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;

4. ຄະນະປະຈຳຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ໝາຍເຖິງ ຄະນະປະຈຳຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເມືອງ, ຂັ້ນແຂວງ, ກະຊວງ, ອົງການ ເອີ້ນຫຍໍ້ວ່າ ຄະນະປະຈຳຄະນະບໍລິຫານງານ ຊປປລ;

5. ຊາວໜຸ່ມ ໝາຍເຖິງ ຜູ້ທີ່ມີອາຍຸ ສິບຫ້າ ຫາ ສາມສິບຫ້າ ປີ;

6. ເຍົາວະຊົນ ໝາຍເຖິງ ເດັກນ້ອຍລາວບັນດາເຜົ່າ ທີ່ມີອາຍຸແຕ່ ເກົ້າ ຫາ ສິບສີ່ ປີ;

7. ເຍົາວະຊົນໜຸ່ມນ້ອຍ ໝາຍເຖິງ ເດັກນ້ອຍລາວບັນດາເຜົ່າທີ່ເປັນສະມາຊິກຂອງການຈັດຕັ້ງເຍົາວະຊົນໜຸ່ມນ້ອຍ;

8. ອະນຸຊົນ ໝາຍເຖິງ ເດັກນ້ອຍລາວທີ່ມີອາຍຸ ແຕ່ ຫົກ ຫາ ແປດ ປີ;

9. ອະນຸຊົນໜຸ່ມນ້ອຍ ໝາຍເຖິງ ເດັກນ້ອຍລາວບັນດາເຜົ່າທີ່ເປັນສະມາຊິກຂອງການຈັດຕັ້ງອະນຸຊົນໜຸ່ມນ້ອຍ;

10. ສະຫະພັນຊາວໜຸ່ມແຫ່ງຊາດລາວ ໝາຍເຖິງ ການຈັດຕັ້ງທາງສັງຄົມທີ່ກວ້າງຂວາງຂອງຊາວໜຸ່ມລາວ ໂດຍບໍ່ຈຳແນກເຜົ່າ, ຖານະທາງເສດຖະກິດ-ສັງຄົມ, ລະດັບການສຶກສາ, ສາຂາອາຊີບ ແລະ ສາສະໜາ.

## ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ຕໍ່ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

ລັດ ວາງນະໂຍບາຍ ແລະ ກົນໄກ ກ່ຽວກັບການຄຸ້ມຄອງ, ການພັດທະນາ, ສ້າງກິດຈະກຳການເຄື່ອນໄຫວ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ກອງເຍົາວະຊົນໜຸ່ມນ້ອຍ, ກອງອະນຸຊົນໜຸ່ມນ້ອຍ.

ລັດ ຊຸກຍູ້, ສົ່ງເສີມ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ດ້ວຍການສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ສາມາດປະຕິບັດພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ເພື່ອດຶງດູດ ແລະ ເສີມຂະຫຍາຍກຳລັງແຮງຂອງຊາວໜຸ່ມ ເຂົ້າໃນການປະຕິບັດ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ລັດ ຊຸກຍູ້, ສົ່ງເສີມ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວໃຫ້ໄດ້ຮັບການສຶກສາ, ວິທະຍາສາດ-ເຕັກນິກ, ເຕັກໂນໂລຊີ, ມີວຽກເຮັດງານທຳ, ໄດ້ຮັບຂໍ້ມູນ ຂ່າວສານ, ເຂົ້າເຖິງການບໍລິການດ້ານສາທາລະນະສຸກ, ມີສ່ວນຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ.

## ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເຄື່ອນໄຫວວຽກງານບົນພື້ນຖານຫຼັກການ ດັ່ງນີ້:

1. ຊີ້ນຳ ນຳພາໂດຍກົງ, ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ;

2. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

3. ປະຕິບັດຫຼັກການລວມສູນປະຊາທິປະໄຕ;

4. ຕື່ນຕົວ, ສະໝັກໃຈ ແລະ ເປັນແບບຢ່າງນຳໜ້າໃນການປະຕິບັດວຽກງານຂອງຊາດ, ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ເຂົ້າຮ່ວມຂະບວນການເຄື່ອນໄຫວຂອງມະຫາຊົນ;

5. ຮັບປະກັນການເຄື່ອນໄຫວ ດ້ວຍຫຼາຍລັກສະນະ ແລະ ຫຼາຍຮູບການ ທີ່ບໍ່ຂັດກັບແນວທາງ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

ມາດຕາ 6 (ປັບປຸງ ) ການຮ່ວມມືສາກົນ

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ບົນພື້ນຖານແນວທາງນະໂຍບາຍການຕ່າງປະເທດຂອງ ສປປ ລາວ ດ້ວຍການແລກປ່ຽນບົດຮຽນ, ວັດທະນະທຳ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການຊ່ວຍເຫຼືອ, ຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ດ້ານວິຊາການ, ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 7 (ປັບປຸງ) ທີ່ຕັ້ງ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນໜຶ່ງໃນອົງການຈັດຕັ້ງມະຫາຊົນໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ພາຍໃຕ້ການຊີ້ນຳນຳພາໂດຍກົງຮອບດ້ານຂອງພັກປະຊາຊົນ ປະຕິວັດລາວ, ເປັນແກນນຳຂອງການຈັດຕັ້ງຊາວໜຸ່ມທຸກສາຂາອາຊີບ, ເປັນຕົວແທນໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ, ມີຖານະທຽບເທົ່າກັບອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງມະຫາຊົນອື່ນ.

**ມາດຕາ 8 (ປັບປຸງ) ພາລະບົດບາດ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີພາລະບົດບາດ ດັ່ງນີ້:

1. ສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກຈິດສຳນຶກໃຫ້ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ກາຍເປັນຜູ້ສືບທອດທີ່ດີຂອງຊາດ;
2. ປຸກລະດົມ, ເຕົ້າໂຮມຄວາມສາມັກຄີຊາວໜຸ່ມລາວບັນດາເຜົ່າ;
3. ຊີ້ນຳ ນຳພາການຈັດຕັ້ງ ແລະ ການເຄື່ອນໄຫວຂອງຊາວໜຸ່ມ, ເຍົາວະຊົນທັນວາ, ອະນຸຊົນທັນວາ;
4. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;
5. ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ.

**ມາດຕາ 9 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;
2. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມຊາວໜຸ່ມ, ເຍົາວະຊົນ, ອະນຸຊົນລາວບັນດາເຜົ່າ ໃຫ້ມີຄຸນສົມບັດສົມທຳປະຕິວັດ, ນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ ລວມທັງສະໜອງຂໍ້ມູນ ຂ່າວສານ ທີ່ຈຳເປັນໃຫ້ຊາວໜຸ່ມ;
3. ສ້າງຂະບວນການຂອງຊາວໜຸ່ມ ເພື່ອຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

4. ສ້າງຕັ້ງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ ຢູ່ໃນທຸກຂົງເຂດວຽກງານທີ່ມີຊາວໜຸ່ມສັງກັດຢູ່ ແລະ ປັບປຸງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ, ເຍົາວະຊົນທັນວາ, ອະນຸຊົນທັນວາ ໃນບ່ອນທີ່ມີແລ້ວ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ປອດໃສ;

5. ສົ່ງເສີມ ຫົວຄິດປະດິດສ້າງ, ຄົ້ນຄວ້າການປະດິດສ້າງສິ່ງໃໝ່ ຂອງຊາວໜຸ່ມລາວບັນດາເຜົ່າ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ;

6. ປະສານສົມທົບກັບໂຮງຮຽນ, ສະຖາບັນຕ່າງໆ ເພື່ອເຂົ້າຮ່ວມການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳໃຫ້ແກ່ຊາວໜຸ່ມ;

7. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

8. ສະເໜີ ແລະ ຍັ້ງຢືນ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ທີ່ກ້າວໜ້າ, ດີເດັ່ນ ຕໍ່ການຈັດຕັ້ງພັກປະຊາຊົນປະຕິວັດລາວ ເພື່ອພິຈາລະນາເຂົ້າເປັນສະມາຊິກພັກ;

9. ປະກອບຄຳເຫັນ ຕໍ່ແນວທາງ, ແຜນນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເປັນຕົ້ນ ບັນຫາທີ່ກ່ຽວພັນກັບວຽກງານຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

10. ສະເໜີສ້າງຕັ້ງ ແລະ ຄຸ້ມຄອງສະຫະພັນຊາວໜຸ່ມແຫ່ງຊາດລາວ;

11. ພົວພັນຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ ຫຼື ຕາມການອະນຸຍາດ;

12. ຄຸ້ມຄອງ ແລະ ຈຳໜ່າຍເຄື່ອງໝາຍ, ເຄື່ອງແບບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

13. ຕິດຕາມກວດກາການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

## ໝວດທີ 2
## ລະບົບ, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

### ມາດຕາ 10 (ປັບປຸງ) ລະບົບການຈັດຕັ້ງ

ລະບົບການຈັດຕັ້ງ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ປະກອບມີ ສີ່ ຂັ້ນຄື:

1. ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
2. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ, ກະຊວງ ແລະ ອົງການ;
3. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;
4. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮາກຖານ, ໜ່ວຍຮາກຖານ.

### ມາດຕາ 11 (ປັບປຸງ) ໂຄງປະກອບການຈັດຕັ້ງ

ໂຄງປະກອບການຈັດຕັ້ງຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວແຕ່ລະຂັ້ນ ໄດ້ກຳນົດໄວ້ໃນກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການ ແລະ ເງື່ອນໄຂຕົວຈິງຂອງວຽກງານໃນແຕ່ລະໄລຍະ.

ມາດຕາ 12 (ປັບປຸງ) ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ດັ່ງນີ້:

1. ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ;

2. ຄະນະເລຂາທິການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ; ຄະນະປະຈຳຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ, ກະຊວງ, ອົງການ, ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;

3. ເລຂາ;

4. ຮອງເລຂາ;

5. ປະທານກວດກາ;

6. ຮອງປະທານກວດກາ.

ສຳລັບຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວແຕ່ລະຂັ້ນ ອາດມີອາຍຸເກີນ ສາມສິບຫ້າປີ ກໍໄດ້ໃນກໍລະນີຈຳເປັນ.

ມາດຕາ 13 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ

ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ເປັນແບບຢ່າງໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍ;

2. ເຕົ້າໂຮມ, ສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ແລະ ນຳພາການຈັດຕັ້ງຜັນຂະຫຍາຍມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ບັນດານິຕິກຳໃຫ້ແກ່ຊາວໜຸ່ມ, ເຍົາວະຊົນ ໄດ້ຮັບຮູ້ຢ່າງກວ້າງຂວາງ;

3. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ແນວທາງ, ນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ ທີ່ພົວພັນເຖິງວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

4. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຮັບຮອງເອົາບັນດາມະຕິກອງປະຊຸມຂັ້ນຂອງຕົນ;

5. ສະເໜີ ສ້າງ, ປັບປຸງນິຕິກຳ ລວມທັງການຈັດຕັ້ງ ແລະ ບຸກຄະລາກອນ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

6. ຊຸກຍູ້, ຕິດຕາມ ແລະ ກວດກາ ວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 14 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະເລຂາທິການ; ຄະນະປະຈຳ

ຄະນະເລຂາທິການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ; ຄະນະປະຈຳຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ກະຊວງ, ອົງການ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາການຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ ຂອງຄະນະພັກ ທີ່ພົວພັນໂດຍກົງກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

2. ຄົ້ນຄວ້າ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມຂັ້ນຂອງຕົນ ແລະ ຂັ້ນເທິງເປັນແຜນການ, ແຜນງານ, ໂຄງການ ເພື່ອຈັດຕັ້ງປະຕິບັດແຕ່ລະໄລຍະ;

3. ກວດກາ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ກົດລະບຽບ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຢ່າງເປັນປົກກະຕິ;

4. ນຳພາການກະກຽມ ກອງປະຊຸມໃຫຍ່ ແລະ ກອງປະຊຸມປະເພດຕ່າງໆ ຂັ້ນຂອງຕົນ;

5. ຄົ້ນຄວ້າ, ປຶກສາຫາລື ແລະ ຕົກລົງບັນຫາສຳຄັນຕ່າງໆ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ**

ເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຜູ້ຮຽກໂຮມ, ເປັນປະທານກອງປະຊຸມໃຫຍ່ ແລະ ກອງປະຊຸມອື່ນ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

2. ຊີ້ນຳ, ນຳພາ, ຕິດຕາມ ກວດກາ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

3. ຂໍທິດຊີ້ນຳ ຈາກຄະນະພັກຂັ້ນເທິງຂອງຕົນ ແລະ ປຶກສາຫາລືວຽກງານສຳຄັນຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ກັບອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ;

4. ຕົກລົງ, ລົງລາຍເຊັນຮັບຮອງເອກະສານ ແລະ ບັນຫາສຳຄັນ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນຕົນ ແລະ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນລຸ່ມ ບົນພື້ນຖານຄວາມເປັນເອກະພາບຂອງໝູ່ຄະນະ;

5. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃຫ້ການຈັດຕັ້ງຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 16 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ**

ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຕາມການມອບໝາຍ;

2. ເປັນຜູ້ຮັກສາການແທນໃນເວລາເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວຕິດຂັດ.

**ມາດຕາ 17 (ໃໝ່) ສິດ ແລະ ໜ້າທີ່ ຂອງປະທານກວດກາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ປະທານກວດກາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ຕາມຂັ້ນ ແລະ ຂອບເຂດຄວາມຮັບຜິດຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ມະຕິ, ຄຳສັ່ງ, ແຈ້ງການແນະນຳ ກ່ຽວກັບວຽກງານກວດກາຂອງຂັ້ນເທິງ, ຂັ້ນຂອງຕົນ ມາເປັນໂຄງການ ແລະ ແຜນການຈັດຕັ້ງປະຕິບັດ;

2. ຕິດຕາມ ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ;

3. ຕິດຕາມ ກວດກາ ການຄຸ້ມຄອງ, ນຳໃຊ້, ປະຕິບັດນະໂຍບາຍ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳ ຕໍ່ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ພະນັກງານຊາວໜຸ່ມ, ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

4. ຕິດຕາມ ກວດກາ ການຄຸ້ມຄອງ, ການນຳໃຊ້ລາຍຮັບ, ວັດຖຸ ແລະ ຊັບສິນ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

5. ຕິດຕາມ ກວດກາ ການຈັດຕັ້ງ ແລະຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນລຸ່ມ ກ່ຽວກັບການຕົກລົງ ລົງວິໄນຕໍ່ ການຈັດຕັ້ງ, ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ທີ່ເຫັນວ່າມີການລະເມີດກົດລະບຽບ, ມະຕິຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

6. ສະເໜີ, ທວງ ໃຫ້ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ສະໜອງຂໍ້ມູນ, ເອກະສານ, ຫຼັກຖານທີ່ພົວພັນກັບການກວດກາ;

7. ຄົ້ນຄວ້າ, ສະເໜີ ວິທີການແກ້ໄຂ ຜົນຂອງການກວດກາ ໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນຂອງຕົນ ພິຈາລະນາ ແລະ ຕົກລົງ ຫຼື ຂັ້ນລຸ່ມ ລົບລ້າງ, ປ່ຽນແປງຮູບການລົງວິໄນ ຕໍ່ການຈັດຕັ້ງຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ທີ່ບໍ່ຖືກຕ້ອງຕາມກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ.

**ມາດຕາ 18 (ໃໝ່) ສິດ ແລະ ໜ້າທີ່ ຂອງຮອງປະທານກວດກາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຮອງປະທານກວດກາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍປະທານກວດກາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມການມອບໝາຍ;

2. ເປັນຜູ້ຮັກສາການແທນ ໃນເວລາປະທານກວດກາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຕິດຂັດ.

## ໝວດທີ 3
## ການເຄື່ອນໄຫວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 19 (ປັບປຸງ) ການເຄື່ອນໄຫວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເຄື່ອນໄຫວຕາມ ສອງ ຮູບການ ຕົ້ນຕໍ ດັ່ງນີ້:

1. ການເຄື່ອນໄຫວໃນກອງປະຊຸມ;

2. ການເຄື່ອນໄຫວທົ່ວໄປ.

ການເຄື່ອນໄຫວໃນກອງປະຊຸມ ແມ່ນ ການເຂົ້າຮ່ວມ ແລະ ດຳເນີນກອງປະຊຸມ ຊຶ່ງໄດ້ກຳນົດໄວ້ໃນກົດລະບຽບ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ.

ການເຄື່ອນໄຫວທົ່ວໄປ ແມ່ນ ການເຂົ້າຮ່ວມຂະບວນການລວມຂອງພັກ-ລັດ, ສັງຄົມ ແລະ ຂະບວນການສະເພາະຂອງຊາວໜຸ່ມ ລວມທັງຮູບແບບອາສາສະໝັກ.

**ມາດຕາ 20 (ປັບປຸງ) ເນື້ອໃນການເຄື່ອນໄຫວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ການເຄື່ອນໄຫວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ສຶກສາອົບຮົມການເມືອງ-ແນວຄິດ ແລະ ປູກຈິດສຳນຶກໃຫ້ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ກາຍເປັນຜູ້ສືບທອດທີ່ດີຂອງຊາດ;

2. ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ຍົກລະດັບຄວາມຮູ້ ຄວາມສາມາດ, ສຶກສາຮ່ຳຮຽນ, ຄົ້ນຄວ້າວິທະຍາສາດ, ສະໜອງຂໍ້ມູນຂ່າວສານດ້ານເຕັກນິກ-ວິທະຍາສາດ, ວັດທະນະທຳ-ສັງຄົມ, ການຜະລິດ, ບໍລິການ, ກິລາ, ສິລະປະວັນນະຄະດີ, ອາສາສະໝັກຊ່ວຍເຫຼືອສັງຄົມ ແລະ ອື່ນໆ;

4. ປັບປຸງກໍ່ສ້າງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ການຈັດຕັ້ງ ເຍົາວະຊົນທົ່ນອາ, ອະນຸຊົນທົ່ນອາ;

5. ສ້າງ, ປັບປຸງ, ປະຕິບັດກົດໝາຍ ແລະ ບັນດານິຕິກຳລຸ່ມກົດໝາຍ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

6. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

7. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ.

## ພາກທີ III
## ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 21 (ປັບປຸງ) ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ**

ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນ ບຸກຄົນທີ່ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ຊຶ່ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ຮັບເຂົ້າເປັນສະມາຊິກຂອງຕົນ.

**ມາດຕາ 22 (ປັບປຸງ) ເງື່ອນໄຂ ແລະ ມາດຕະຖານ ຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ**

ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ມີເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸ ແຕ່ ສິບຫ້າປີ ຫາ ສາມສິບຫ້າປີ ໂດຍບໍ່ຈຳແນກເພດ, ເຜົ່າ, ຄວາມເຊື່ອຖື ຫຼື ຖານະທາງເສດຖະກິດ;

2. ມີນ້ຳໃຈຮັກຊາດ, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີຄວາມຫ້າວຫັນ ໃນຂະບວນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;

3. ເປັນເຈົ້າການຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ກາຍເປັນພົນລະເມືອງດີຂອງຊາດ, ເປັນຜູ້ສືບທອດທີ່ດີ ແລະ ເປັນຜູ້ທີ່ເຊື່ອຖືຂອງສັງຄົມ;

4. ເປັນແບບຢ່າງນຳໜ້າໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ ແລະ ກົດໝາຍ;

5. ມີຄວາມຕື່ນຕົວ, ສະໝັກໃຈ ປະຕິບັດກົດລະບຽບ ແລະ ມະຕິ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

6. ມີສຸຂະພາບແຂງແຮງດີ.

**ມາດຕາ 23 (ປັບປຸງ) ການເຄື່ອນໄຫວຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ**

ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ເຄື່ອນໄຫວຕາມແຜນການ, ແຜນງານ, ໂຄງການ, ກິດຈະກຳຕ່າງໆຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ວຽກງານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ**

ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນແບບຢ່າງ ໃນການເຄົາລົບ ແລະ ປະຕິບັດກົດໝາຍ, ຄົ້ນຄວ້າ, ຮໍ່າຮຽນ, ຍົກລະດັບຄວາມຮູ້ທາງດ້ານທິດສະດີການເມືອງ, ເຕັກນິກວິຊາການ, ພາສາຕ່າງປະເທດ, ຄວາມສາມາດດ້ານຕ່າງໆ, ຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ກາຍເປັນພົນລະເມືອງດີຂອງຊາດ;

2. ເປັນເຈົ້າການ ເຕົ້າໂຮມຄວາມສາມັກຄີ ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

3. ປະກອບຄໍາເຫັນ, ລົງຄະແນນສຽງ ແລະ ສະເໜີຂໍ້ລິເລີ່ມຕ່າງໆຂອງຕົນຕໍ່ກອງປະຊຸມຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

4. ເລືອກຕັ້ງ ແລະ ຮັບສະໝັກເລືອກຕັ້ງ ເຂົ້າໃນຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວແຕ່ລະຂັ້ນ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

5. ສະເໜີ ຕໍ່ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ, ຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ໃນກໍລະນີທີ່ຖືກລະເມີດ;

6. ເປັນເຈົ້າການເຄື່ອນໄຫວວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວັດທະນະທໍາ-ສັງຄົມ, ປົກປັກຮັກສາສິ່ງແວດລ້ອມ ແລະ ກິດຈະກໍາອື່ນ ທີ່ບໍ່ຂັດກັບກົດໝາຍ;

7. ໄດ້ຮັບຂໍ້ມູນ ຂ່າວສານຕ່າງໆ ຕາມເງື່ອນໄຂຕົວຈິງ;

8. ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມລັດຖະທໍາມະນູນ ແລະ ກົດໝາຍ;

9. ເປັນເຈົ້າການສ້າງ, ປັບປຸງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ກອງເຍົາວະຊົນທັນວາ, ກອງອະນຸຊົນທັນວາ ໃຫ້ໜັກແໜ້ນເຂັ້ມແຂງ;

10. ເປັນເຈົ້າການຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 25 (ປັບປຸງ) ພັນທະ ຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ**

ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ມີ ພັນທະ ດັ່ງນີ້:

1. ເຄົາລົບ, ປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ກົດລະບຽບ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

2. ເປັນເຈົ້າການຄົ້ນຄວ້າຮໍ່າຮຽນ, ສະແຫວງຫາເຕັກໂນໂລຊີ ທັນສະໄໝ, ພັດທະນາສີມືແຮງງານ, ວິຊາຊີບ, ສ້າງວຽກເຮັດງານທໍາ ທີ່ຖືກຕ້ອງຕາມກົດໝາຍ;

3. ເຄົາລົບນັບຖື, ເບິ່ງແຍງ ແລະ ໃຫ້ການຊ່ວຍເຫຼືອ ຄອບຄົວ, ພໍ່ແມ່ ຫຼື ຜູ້ປົກຄອງ, ຜູ້ຊົງຄຸນວຸດທິ ແລະ ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ຜູ້ທຸກຍາກ, ຄົນພິການ ແລະ ຜູ້ສູງອາຍຸ;

4. ປຸກລະດົມ ຂົນຂວາຍຊາວໜຸ່ມມະຫາຊົນ ເຂົ້າເປັນສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ;

5. ເປັນເຈົ້າການ ປະຕິບັດພັນທະຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ເປັນຕົ້ນ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ວຽກງານເສດຖະກິດ-ສັງຄົມ, ພັນທະອອກແຮງງານ.

**ມາດຕາ 26 (ປັບປຸງ) ຜົນປະໂຫຍດຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ**

ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ຮັບຜົນປະໂຫຍດ ດັ່ງນີ້:

1. ຜູ້ທີ່ມີຜົນງານດີເດັ່ນຈະໄດ້ຮັບການສ້າງເປັນເປົ້າໝາຍ ເພື່ອນໍາສະເໜີຕໍ່ການຈັດຕັ້ງພັກ ພິຈາລະນາເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ;

2. ໄດ້ຮັບການສ້າງ, ບໍາລຸງ, ຍົກລະດັບຄວາມຮູ້ ຄວາມສາມາດດ້ານຕ່າງໆ ຕາມເງື່ອນໄຂຕົວຈິງ;

3. ໄດ້ຮັບການບັນຈຸ, ສັບຊ້ອນເຂົ້າໃນຕໍາແໜ່ງງານຕ່າງໆ ຕາມຄວາມຮູ້, ຄວາມສາມາດ ແລະ ເງື່ອນໄຂຕົວຈິງ;

4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ ໃນເມື່ອຖືກລະເມີດ;

5. ໄດ້ຮັບການເລື່ອນຊັ້ນ, ຂັ້ນ, ຕໍາແໜ່ງ, ຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ.

## ພາກທີ IV
## ກອງປະຊຸມຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 27 ປະເພດກອງປະຊຸມ**

ກອງປະຊຸມຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສາມ ປະເພດ ຄື:

1. ກອງປະຊຸມໃຫຍ່;
2. ກອງປະຊຸມສາມັນ;
3. ກອງປະຊຸມວິສາມັນ.

**ມາດຕາ 28 (ປັບປຸງ ) ກອງປະຊຸມໃຫຍ່ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ກອງປະຊຸມໃຫຍ່ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສີ່ຂັ້ນ ດັ່ງນີ້:

1. ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ;
2. ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ຫຼື ກອງປະຊຸມໃຫຍ່ຊາວໜຸ່ມ ແຂວງ, ນະຄອນຫຼວງ, ກະຊວງ ແລະ ອົງການ;
3. ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ຫຼື ກອງປະຊຸມໃຫຍ່ຊາວໜຸ່ມ ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;
4. ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວຮາກຖານ.

ກອງປະຊຸມໃຫຍ່ ເປີດຂຶ້ນຫ້າປີໃດເທື່ອໜຶ່ງ, ໃນກໍລະນີຈຳເປັນ ອາດເປີດຂຶ້ນໄວ ຫຼື ຊ້າກວ່າກຳນົດກໍໄດ້ ແຕ່ບໍ່ໃຫ້ເກີນ ຫຼື ຫຼຸດຫົກເດືອນ.

**ມາດຕາ 29 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ, ຮັບຮອງເອົາບົດລາຍງານການເມືອງ ແລະ ແຜນພັດທະນາຊາວໜຸ່ມ, ເຍົາວະຊົນ, ອະນຸຊົນຂັ້ນຂອງຕົນ;
2. ຄົ້ນຄວ້າ, ຮັບຮອງເອົາການປັບປຸງກົດລະບຽບ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ສຳລັບກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ;
3. ເລືອກຕັ້ງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ຂັ້ນຂອງຕົນ;
4. ດຳເນີນກອງປະຊຸມຄັ້ງປະຖົມມະລືກ ຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ຊຸດໃໝ່ ເພື່ອເລືອກຕັ້ງຄະນະເລຂາທິການ ຫຼື ຄະນະປະຈຳ, ເລຂາ, ຮອງເລຂາ, ປະທານກວດກາ, ຮອງປະທານກວດກາ ແລະ ເລືອກຕັ້ງຜູ້ແທນຂອງຕົນໄປເຂົ້າຮ່ວມກອງປະຊຸມໃຫຍ່ຂັ້ນເທິງຖັດຕົນ;
5. ຮັບຮອງເອົາມະຕິກອງປະຊຸມໃຫຍ່ ຂັ້ນຂອງຕົນ.

**ມາດຕາ 30 (ປັບປຸງ) ກອງປະຊຸມສາມັນ**

ກອງປະຊຸມສາມັນ ແມ່ນ ກອງປະຊຸມຄົບຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ຊຶ່ງເປີດຂຶ້ນໜຶ່ງຄັ້ງຕໍ່ປີ ແລະ ຕ້ອງມີກຳມະການຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມຂອງຈຳນວນທັງໝົດ ຈຶ່ງສາມາດເປີດກອງປະຊຸມໄດ້.

**ມາດຕາ 31 (ປັບປຸງ) ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນ**

ກອງປະຊຸມສາມັນ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການເຄື່ອນໄຫວ, ທິດທາງວຽກງານປະຈໍາປີຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນຂອງຕົນ;

2. ດໍາເນີນຊີວິດການເມືອງພາຍໃນ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ກ່ຽວກັບການປະຕິບັດວຽກງານປະຈໍາປີ;

3. ຄົ້ນຄວ້າ, ສະເໜີແຕ່ງຕັ້ງຄະນະເລຂາທິການ, ຄະນະປະຈໍາ ແລະ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ແທນຈໍານວນທີ່ວ່າງລົງ;

4. ຄົ້ນຄວ້າ, ປະກອບຄໍາເຫັນຕໍ່ການປັບປຸງກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຫຼື ກົດລະບຽບຂອງການຈັດຕັ້ງເຍົາວະຊົນທັນວາ, ອະນຸຊົນທັນວາ;

5. ຕົກລົງບັນຫາສໍາຄັນຕ່າງໆ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນຕົນ;

6. ຮັບຮອງເອົາມະຕິກອງປະຊຸມຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນຕົນ.

**ມາດຕາ 32 (ປັບປຸງ) ກອງປະຊຸມວິສາມັນ**

ກອງປະຊຸມວິສາມັນ ແມ່ນ ກອງປະຊຸມຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ເພື່ອພິຈາລະນາວຽກງານໃດໜຶ່ງທີ່ຈໍາເປັນ ແລະ ຮີບດ່ວນ ຕາມການສະເໜີຂອງຄະນະເລຂາທິການ, ຄະນະປະຈໍາ ຫຼື ກໍາມະການໃນຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ຢ່າງໜ້ອຍໜຶ່ງສ່ວນສີ່ ຂອງຈໍານວນທັງໝົດຂັ້ນຂອງຕົນ.

**ມາດຕາ 33 (ປັບປຸງ) ມະຕິກອງປະຊຸມ**

ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ມີຄະແນນສຽງຮັບຮອງເອົາຫຼາຍກວ່າ ເຄິ່ງໜຶ່ງ ຂອງຈໍານວນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ V
## ຄວາມຮັບຜິດຊອບຂອງລັດ, ສັງຄົມ ແລະ ຄອບຄົວ ຕໍ່ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 34 (ປັບປຸງ) ຄວາມຮັບຜິດຊອບຂອງລັດ**

ລັດ ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ດ້ວຍການພັດທະນາຢ່າງຮອບດ້ານ, ສະໜອງບຸກຄະລາກອນ, ງົບປະມານ, ກໍ່ສ້າງພື້ນຖານໂຄງລ່າງ, ພາຫະນະ, ວັດຖຸເຕັກນິກ ແລະ ສິ່ງທີ່ຈໍາເປັນອື່ນ ເພື່ອໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ສາມາດເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງຕົນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ.

ລັດ ວາງນະໂຍບາຍ ພັດທະນາ, ສ້າງເງື່ອນໄຂໃຫ້ຊາວໜຸ່ມ, ເຍົາວະຊົນ ມີສຸຂະພາບແຂງແຮງ, ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດສົມທໍາປະຕິວັດ, ມີວຽກເຮັດງານທໍາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງເຂົາເຈົ້າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ລັດ ໃຫ້ການຍ້ອງຍໍ ສັນລະເສີນ ແລະ ໃຫ້ນາມມະຍົດ ຕໍ່ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ຜູ້ທີ່ເສຍສະຫຼະຊີວິດ, ເສຍອົງຄະ ເພື່ອປະເທດຊາດ, ຜູ້ທີ່ມີຜົນງານດີເດັ່ນໃນການອອກແຮງງານ ແລະ ຄົ້ນ

ຄວ້າປະດິດສ້າງສິ່ງໃໝ່ໆ ເພື່ອຮັບໃຊ້ໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ລັດ ສົ່ງເສີມ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ທີ່ສໍາເລັດການປະຕິບັດພັນທະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຊຶ່ງມີຜົນງານດີເດັ່ນ ໄດ້ຮັບການສຶກສາ ແລະ ພັດທະນາອິຊາຊີບໃດໜຶ່ງ.

**ມາດຕາ 35 (ປັບປຸງ) ຄວາມຮັບຜິດຊອບຂອງສັງຄົມ**

ອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງທາງສັງຄົມ ລວມທັງ ບຸກຄົນ ແລະ ນິຕິບຸກຄົນ ຕ້ອງມີຄວາມຮັບຜິດຊອບ ໃນການອໍານວຍຄວາມສະດວກ, ໃຫ້ການຮ່ວມມື, ສະໜັບສະໜູນຕໍ່ການຈັດຕັ້ງ, ການເຄື່ອນໄຫວຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ຊາວໜຸ່ມ ແລະ ເຍົາວະຊົນ.

**ມາດຕາ 36 (ປັບປຸງ) ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ຕ້ອງມີຄວາມຮັບຜິດຊອບ ໃນການສຶກສາອົບຮົມ, ປຶກສາຫາລື, ໃຫ້ຄໍາແນະນໍາ, ໃກ້ຊິດຕິດແທດ, ໃຫ້ຄວາມຮັກ, ຄວາມອົບອຸ່ນ, ຄວາມສະເໝີພາບ, ຄວາມເປັນທໍາ, ສ້າງເງື່ອນໄຂ ແລະ ປຸກລະດົມຊຸກຍູ້, ສົ່ງເສີມ ການເຄື່ອນໄຫວທີ່ເປັນປະໂຫຍດ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ພ້ອມທັງເປັນແບບຢ່າງໃນການດໍາລົງຊີວິດ, ເຄົາລົບ ແລະ ປະຕິບັດ ລັດຖະທໍາມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງບັນດາເຜົ່າ.

## ພາກທີ VI
## ງົບປະມານ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 37 (ປັບປຸງ) ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ເພື່ອສະໜອງໃຫ້ແກ່ການເຄື່ອນໄຫວວຽກງານ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ເງິນບໍາລຸງຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ;
3. ກອງທຶນພັດທະນາຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;
4. ລາຍຮັບຈາກການດໍາເນີນທຸລະກິດ, ຈາກກິດຈະກໍາຫາລາຍໄດ້ ຂອງການຈັດຕັ້ງຊາວໜຸ່ມແຕ່ລະຂັ້ນ;
5. ການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ອົງການຈັດຕັ້ງສາກົນ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
6. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 38 (ປັບປຸງ ) ການຄຸ້ມຄອງລາຍຮັບ-ລາຍຈ່າຍ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວແຕ່ລະຂັ້ນ ຄຸ້ມຄອງລາຍຮັບ-ລາຍຈ່າຍຂອງຕົນ ຢ່າງລວມສູນ ແລະ ເປັນເອກະພາບ, ປະຕິບັດລະບອບບັນຊີລາຍຮັບ-ລາຍຈ່າຍ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ຮັບປະກັນຄວາມໂປ່ງໃສ ສາມາດກວດກາໄດ້.

ເງິນບໍາລຸງຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນລຸ່ມ ຕ້ອງສົ່ງໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເທິງຖັດຕົນ ຕາມກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ.

**ມາດຕາ 39 (ປັບປຸງ) ການນຳໃຊ້ລາຍຮັບ**

ການນຳໃຊ້ລາຍຮັບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຕ່ລະຂັ້ນ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນພັດທະນາຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;
2. ການຈັດກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ;
3. ວຽກງານບໍລິຫານ, ການສົ່ງເສີມວິຊາການ ແລະ ການປະຕິບັດນະໂຍບາຍ;
4. ການເຄື່ອນໄຫວກິດຈະກຳຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
5. ການເຄື່ອນໄຫວວຽກງານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 40 (ປັບປຸງ) ຂໍ້ຫ້າມສຳລັບສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ**

ຫ້າມສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຄວາມຮັບຜິດຊອບຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ພັກພວກ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ເມີນເສີຍຕໍ່ການປະຕິບັດໜ້າທີ່ ແລະ ພັນທະຂອງຕົນ;

3. ມົ້ວສຸມສິ່ງເສບຕິດ, ສິ່ງມຶນເມົາ, ໂສເພນີ, ສິ່ງລາມົກ, ຫຼິ້ນການພະນັນ; ຜະລິດ, ຊື້-ຂາຍ, ຄອບຄອງ, ເຊື່ອງອຳ, ປົກບັງ, ຂົນສົ່ງສິ່ງເສບຕິດ; ຜະລິດ, ຈຳໜ່າຍ, ເຜີຍແຜ່, ຊົມໃຊ້ຜະລິດຕະພັນວັດທະນະທຳ ຫຼື ມີພຶດຕິກຳທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ; ນຳໃຊ້ສື່ເອເລັກໂຕຣນິກ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ຜະລິດ, ຊື້-ຂາຍ, ຄອບຄອງ ແລະ ຖືອາວຸດທຸກຊະນິດ, ວັດຖຸລະເບີດ, ສານພິດທຸກຊະນິດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ຈັດຕັ້ງເປັນກຸ່ມກ້ອນ, ກໍ່ການປັ່ນປ່ວນ, ຊຸມນຸມປະທ້ວງ, ສ້າງຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບໃນສັງຄົມ ແລະ ການເຄື່ອນໄຫວອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

6. ໃສ່ຮ້າຍປ້າຍສີ, ແບ່ງແຍກຄວາມສາມັກຄີລະຫວ່າງຂັ້ນເທິງ, ຂັ້ນລຸ່ມ, ບັນດາເຜົ່າ, ສາສະໜາໃນໝູ່ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ຢູ່ພາຍໃນ ແລະ ສາກົນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 41 (ປັບປຸງ) ຂໍ້ຫ້າມສຳລັບຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ**

ຫ້າມຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ພັກພວກ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

2. ສ້າງພັກພວກກຸ່ມກ້ອນ, ຈຳກັດຄວາມກ້າວໜ້າ ແລະ ລົງວິໄນຕໍ່ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ກົດລະບຽບ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

3. ເມີນເສີຍຕໍ່ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້;

4. ລະເມີດກົດໝາຍ, ກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 42 (ປັບປຸງ) ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ການຈັດຕັ້ງຂອງຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ຂັດຂວາງ, ນາບຂູ່, ບໍ່ສ້າງເງື່ອນໄຂ, ບໍ່ອໍານວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

3. ໂຄສະນາ ຊວນເຊື່ອກ່ຽວກັບສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກ; ໃຫ້ຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງເພື່ອສ້າງສິ່ງຈູງໃຈ, ຊັກຊວນ, ຊື້ຈ້າງຈອບອອຍ ແລະ ເບື່ອເມົາຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

4. ປົກປ້ອງ, ເມີນເສີຍຕໍ່ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ທີ່ມີການກະທໍາ ຫຼື ຈະກະທໍາສິ່ງໃດໜຶ່ງທີ່ບໍ່ຖືກຕ້ອງ;

5. ຂູດຮີດແຮງງານ, ຂູດຮີດທາງເພດ ຫຼື ໃຊ້ຄວາມຮຸນແຮງຕໍ່ຊາວໜຸ່ມ, ເຍົາວະຊົນ, ອະນຸຊົນໃນທຸກຮູບແບບ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 43 (ປັບປຸງ) ອົງການຄຸ້ມຄອງວຽກງານຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ອົງການຄຸ້ມຄອງວຽກງານຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ດັ່ງນີ້:

1. ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;

2. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ, ກະຊວງ ແລະ ອົງ ການ;

3. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ;

4. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮາກຖານ, ໜ່ວຍຮາກຖານ.

ໃນກໍລະນີມີຄວາມຈໍາເປັນ ອາດສ້າງຕັ້ງຄະນະກໍາມະການແຫ່ງຊາດ ເພື່ອຄຸ້ມຄອງ ແລະ ພັດທະນາຊາວໜຸ່ມ.

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ຫຼື ປະກອບຄໍາເຫັນຕໍ່ ຮ່າງນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຄົ້ນຄວ້າ, ຫັນແນວທາງ, ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ເປັນແຜນການ, ແຜນງານ, ໂຄງການ, ກິດຈະກໍາ ແລະ ຈັດຕັ້ງປະຕິບັດ;

3. ສຶກສາອົບຮົມການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ຂອງທ້ອງຖິ່ນ ແລະ ມູນເຊື້ອຂອງຊາວໜຸ່ມລາວ;

4. ສະເໜີ ການຈັດຕັ້ງທີ່ກ່ຽວຂ້ອງປັບປຸງນິຕິກຳ ທີ່ເຫັນວ່າບໍ່ສອດຄ່ອງ ຫຼື ຂັດກັບສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

5. ສະເໜີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢຸດເຊົາການເຄື່ອນໄຫວ ທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

6. ຊີ້ນຳ ນຳພາ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ, ມະຕິ, ຄຳສັ່ງ ແລະ ຄຳແນະນຳກ່ຽວກັບວຽກງານຊາວໜຸ່ມ ໃນທົ່ວປະເທດ;

7. ພິຈາລະນາ, ສະເໜີ ແນະນຳການສ້າງຕັ້ງ, ປັບປຸງ, ຍຸບເລີກການຈັດຕັ້ງຊາວໜຸ່ມ, ເຍົາວະຊົນທັນວາ, ອະນຸຊົນທັນວາ ແລະ ບັນດານິຕິກຳຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຂັ້ນຂອງຕົນ ແລະ ຂັ້ນລຸ່ມທີ່ເຫັນວ່າຂັດກັບກົດໝາຍ;

8. ຄົ້ນຄວ້າ, ພິຈາລະນາ, ສະເໜີແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍຕໍ່ພະນັກງານຂັ້ນຂອງຕົນທີ່ມີຜົນງານດີເດັ່ນ, ລົງວິໄນຕໍ່ສະມາຊິກ ແລະ ພະນັກງານຊາວໜຸ່ມ ຜູ້ກະທຳຜິດ;

9. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

10. ຮັບຄຳສະເໜີຂອງຊາວໜຸ່ມລາວບັນດາເຜົ່າ ເພື່ອພິຈາລະນາແກ້ໄຂ ຕາມພາລະບົດບາດຂອງຕົນ;

11. ປະສານສົມທົບກັບອົງການຈັດຕັ້ງຂອງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ;

12. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ບົນພື້ນຖານແນວທາງການຕ່າງປະເທດຂອງ ສປປ ລາວ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ໃນຂອບເຂດທົ່ວປະເທດ ຕໍ່ຂັ້ນເທິງ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ, ກະຊວງ ແລະ ອົງການ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ, ກະຊວງ ແລະ ອົງການ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍແນວທາງ, ນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ກົດໝາຍ, ມະຕິ, ຄຳສັ່ງ ແລະ ແຈ້ງການແນະນຳຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເທິງ ໃຫ້ເປັນແຜນການ, ແຜນງານ, ໂຄງການ, ກິດຈະກຳຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມະຕິ, ຄຳສັ່ງ ແລະ ແຈ້ງການແນະນຳຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເທິງ ໃຫ້ແກ່ຊາວໜຸ່ມ;

3. ສຶກສາອົບຮົມການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ຂອງທ້ອງຖິ່ນ ແລະ ມູນເຊື້ອຂອງຊາວໜຸ່ມລາວ;

4. ຄົ້ນຄວ້າ, ປະກອບຄໍາເຫັນຕໍ່ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງກະຊວງ, ອົງການ, ທ້ອງຖິ່ນ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

5. ພິຈາລະນາ, ສະເໜີ ແນະນໍາການສ້າງຕັ້ງ, ປັບປຸງ, ຍຸບເລີກການຈັດຕັ້ງຊາວໜຸ່ມ, ເຍົາວະຊົນທັນວາ, ອະນຸຊົນທັນວາ ແລະ ບັນດານິຕິກໍາ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນຂອງຕົນ ແລະ ຂັ້ນລຸ່ມ ທີ່ເຫັນວ່າຂັດກັບກົດໝາຍ;

6. ຄົ້ນຄວ້າ ແກ້ໄຂຄໍາຮ້ອງຮຽນດ້ວຍຮູບການຕ່າງໆທີ່ຖືກຕ້ອງຕາມກົດໝາຍ;

7. ພິຈາລະນາແກ້ໄຂຄໍາສະເໜີ ຂອງຊາວໜຸ່ມລາວບັນດາເຜົ່າ;

8. ປະສານສົມທົບກັບອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງ, ສະຫະພັນກໍາມະບານ, ສະຫະພັນນັກຮົບເກົ່າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ;

9. ພົວພັນຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ຕໍ່ຂັ້ນເທິງ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 46 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທຽບເທົ່າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ມະຕິ, ຄໍາສັ່ງ ແລະ ແຈ້ງການແນະນໍາ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເທິງ ໃຫ້ເປັນແຜນການ, ແຜນງານ, ໂຄງການ, ກິດຈະກໍາຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ ແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ມະຕິ, ຄໍາສັ່ງ, ແຈ້ງການແນະນໍາຂອງພັກ-ລັດ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເທິງ ໃຫ້ແກ່ຊາວໜຸ່ມ;

3. ສຶກສາອົບຮົມການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທໍາຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ຂອງທ້ອງຖິ່ນ ແລະ ມູນເຊື້ອຂອງຊາວໜຸ່ມລາວ;

4. ສ້າງ, ປັບປຸງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃຫ້ມີຄວາມເຂັ້ມແຂງ, ຂະຫຍາຍ ຫຼື ຍຸບເລີກການຈັດຕັ້ງຊາວໜຸ່ມ, ເຍົາວະຊົນທັນວາ, ອະນຸຊົນທັນວາ ໃນຂັ້ນຂອງຕົນ;

5. ຕິດຕາມ, ຊຸກຍູ້ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ຂັ້ນຂອງຕົນ, ຂັ້ນຮາກຖານ ແລະ ໜ່ວຍຮາກຖານ ໃຫ້ເຂັ້ມແຂງ;

6. ຄົ້ນຄວ້າ ແກ້ໄຂຄໍາຮ້ອງຮຽນ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

7. ພິຈາລະນາແກ້ໄຂຄໍາສະເໜີ ຂອງຊາວໜຸ່ມລາວບັນດາເຜົ່າ;

8. ປະສານສົມທົບກັບອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງ, ສະຫະພັນກໍາມະບານ, ສະຫະພັນນັກຮົບເກົ່າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ;

9. ພົວພັນຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ຕໍ່ຂັ້ນເທິງ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮາກຖານ, ໜ່ວຍຮາກຖານ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮາກຖານ, ໜ່ວຍຮາກຖານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ເຜີຍແຜ່ ແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ມະຕິ, ຄຳສັ່ງ, ແຈ້ງການແນະນຳຂອງພັກ-ລັດ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເທິງ ໃຫ້ແກ່ຊາວໜຸ່ມ;

2. ເຕົ້າໂຮມຄວາມສາມັກຄີ, ນຳພາຂະບວນການຂອງຊາວໜຸ່ມ ເພື່ອປະກອບສ່ວນແກ້ໄຂຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ໂດຍຕິດພັນກັບການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ເຂົ້າຮ່ວມແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນ;

4. ປະສານສົມທົບກັບການຈັດຕັ້ງອື່ນ, ຄອບຄົວ ຫຼື ຜູ້ປົກຄອງ ໃນການປັບປຸງ, ກໍ່ສ້າງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃຫ້ເຕີບໃຫຍ່ເຂັ້ມແຂງ;

5. ນຳພາຊາວໜຸ່ມສ້າງລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ຕໍ່ຂັ້ນເທິງ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 48 (ປັບປຸງ) ອົງການກວດກາ**

ອົງການກວດກາວຽກງານ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້ ຊຶ່ງດຳເນີນໂດຍຄະນະກວດກາຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

2. ອົງການກວດກາພາຍນອກ ຊຶ່ງດຳເນີນໂດຍ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກວດກາ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະກວດກາ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ທວງເອົາເອກະສານ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;

2. ລົງກວດກາເປົ້າໝາຍກັບທີ່ ພາຍຫຼັງທີ່ໄດ້ຮັບການລາຍງານ ຫຼື ຂໍ້ມູນກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

3. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາໂຈະ, ຍົກເລີກນິຕິກຳ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ທີ່ຂັດກັບກົດໝາຍ ຫຼື ການເຄື່ອນໄຫວ, ການປະຕິບັດນິຕິກຳທີ່ບໍ່ຖືກຕ້ອງຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ;

4. ປະສານສົມທົບກັບຄະນະກວດກາພັກ, ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງ, ສະຫະພັນກຳມະບານ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງ ໃນຂັ້ນດຽວກັນ;

5. ສະເໜີນຳໃຊ້ວິທີການ ແລະ ມາດຕະການແກ້ໄຂຜົນຂອງການກວດກາ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 (ປັບປຸງ) ເນື້ອໃນການກວດກາ**

ເນື້ອໃນ ຕົ້ນຕໍ ຂອງການກວດກາ ມີ ດັ່ງນີ້:

1. ການນຳໃຊ້ສິດ, ປະຕິບັດໜ້າທີ່, ຄວາມຮັບຜິດຊອບ ແລະ ແບບແຜນວິທີເຮັດວຽກຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ໃນການປະຕິບັດລັດຖະທຳມະນູນ, ກົດໝາຍ, ກົດລະບຽບ, ມະຕິກອງປະຊຸມຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

2. ການອອກມະຕິ, ຂໍ້ຕົກລົງ, ແຈ້ງການແນະນຳ ແລະ ແຜນການຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

3. ການຄຸ້ມຄອງ, ການນຳໃຊ້, ການປະຕິບັດນະໂຍບາຍ ຕໍ່ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

4. ການຄຸ້ມຄອງ, ການນຳໃຊ້ລາຍຮັບ, ວັດຖຸ ແລະ ຊັບສິນຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ.

**ມາດຕາ 51 (ປັບປຸງ) ຮູບການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ແມ່ນ ການກວດກາຕາມແຜນການ ຂອງຄະນະກວດກາແຕ່ລະຂັ້ນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາຕາມຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງຄະນະກວດກາ ແລະ ຄຳສະເໜີຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວແຕ່ລະຂັ້ນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ.

ການກວດກາວຽກງານ ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IX
## ວັນສ້າງຕັ້ງ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 52 (ປັບປຸງ) ວັນສ້າງຕັ້ງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ວັນສ້າງຕັ້ງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນ ວັນທີ 14 ເມສາ 1955 ແລະ ໃຫ້ຖືເອົາວັນດັ່ງກ່າວເປັນວັນສະເຫຼີມສະຫຼອງ.

**ມາດຕາ 53 ເຄື່ອງໝາຍ ແລະ ເຄື່ອງແບບ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ທຸງ, ເຄື່ອງໝາຍ ແລະ ເຄື່ອງແບບຕາມຮູບແບບ ທີ່ໄດ້ຖືກຮັບຮອງເອົາ ໃນກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ.

**ມາດຕາ 54 (ປັບປຸງ) ຕາປະທັບ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຕ່ລະຂັ້ນ ມີຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງການ ຊຶ່ງໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 55 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 56 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະໄດ້ຮັບການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 57 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 58 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບເລກທີ 06/ສພຊ, ລົງວັນທີ 26 ພະຈິກ 2009.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້